## ພິທີເຊັນ (MOU) ການມອບ-ຮັບໜີ້ທວງຍາກ ແລະ ຊັບສິນລໍຖ້າ ລະຫວ່າງ ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ແລະ ທະນາຄານພັດທະນາລາວ






ໃນວັນທີ 15 ມິຖຸນາ 2022 ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ (ສກໜ) ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາ (ທພລ) ໄດ້ຈັດຕັ້ງພິທີເຊັນບົດບັນທຶກຊ່ວຍຈຳ (MOU) ການມອບ-ຮັບໜີ້ທວງຍາກ ແລະ ຊັບສິນລໍຖ້າ ຢູ່ທີ່ຫ້ອງປະຊຸມຊັ້ນ IV ທຫລ ເຊິ່ງຕາງໜ້າທັງ 2 ຝ່າຍລົງນາມໃນເຊັນ MOU ຄັ້ງນີ້ແມ່ນ ທ່ານ ນ. ທິບພາວັນ ຈັນທະຜາສຸກ ຫົວໜ້າ ສກໜ ແລະ ທ່ານ ລິດສະໝີ ຣາດຊະວົງ ຜູ້ອຳນວຍການ ທພລ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ແລະ ທ່ານ ຈັນທະໜອມ ພິມມະນີ ປະທານຄະນະຜູ້ບໍລິຫານງານທະນາຄານພັດທະນາລາວ. ເຊິ່ງມີຕາງໜ້າຈາກກະຊວງການເງິນ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການຂອງທັງສອງພາກສ່ວນໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



ຈຸດປະສົງຂອງການເຊັນ MOU ໃນຄັ້ງນີ້ໄດ້ມີການເຊັນບົດບັນທຶກຊ່ວຍຈຳລະຫວ່າງ ທພລ ແລະ ສກໝ ເພື່ອຄຸ້ມຄອງບໍລິຫານ ແລະ ເກັບກູ້ໜີ້ສິ່ງໃຫ້ກະຊວງການເງິນ ເພື່ອມອບເຂົ້າເປັນງົບປະມານແຫ່ງລັດ ຕາມຂໍ້ຕົກລົງ ສະບັບເລກທີ 461/ທຫລ, ລົງວັນທີ 31 ສິງຫາ 2021. ພິທີດັ່ງກ່າວໄດ້ປິດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍຈົບງາມ.

ຂ່າວ-ພາບ: ນ ທິດສະບາ ທຳມະວົງສີງ

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*